ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0185 /ຫອຄ.ຫຄວ

ນະຄອນຫຼວງວຽງຈັນ, ວັນທີ 21 ມັງກອນ 2016

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມແຜນການ ແລະ ການຮ່ວມມື
ຂາເຂົ້າ ເລກທີ 113
ວັນທີ 25.1.16

# ແຈ້ງການ

ເຖິງ:

- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫລວງ
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ
- ປະຊາຊົນບັນດາເຜົ່າ ທີ່ມີຈຸດປະສົງຢາກສ້າງຕັ້ງສະຫະກອນ

ເລື່ອງ: ແບບຟອມ, ຄ່າແບບຟອມ, ຄ່າທຳນຽມ ແລະ ກຳນົດເວລາໃນການພິຈາລະນາຄຳຮ້ອງແຈ້ງຈົດທະບຽນສະຫະກອນ

- ອີງຕາມດຳລັດວ່າດ້ວຍສະຫະກອນ, ສະບັບເລກທີ 136/ນຍ, ລົງວັນທີ 5 ມີນາ 2010;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະການຄ້າ, ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.

ເພື່ອເຮັດໃຫ້ການຈົດທະບຽນສະຫະກອນ ສອດຄ່ອງກັບເນື້ອໃນ ຈິດໃຈຂອງດຳລັດວ່າດ້ວຍສະຫະກອນ, ມີລະບົບຈະແຈ້ງ, ສະດວກສະບາຍ, ເຂົ້າໃຈງ່າຍສຳລັບປະຊາຊົນບັນດາເຜົ່າ ແນໃສ່ສ້າງບັນຍາກາດທາງທຸລະກິດທີ່ເອື້ອອຳນວຍຢ່າງເຕັມສ່ວນ ແກ່ການສ້າງຕັ້ງ, ສົ່ງເສີມ ແລະ ພັດທະນາສະຫະກອນ ໃຫ້ຂະຫຍາຍຕົວກາຍ ເປັນປັດໃຈສຳຄັນໃນການແກ້ໄຂຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ.

ຫ້ອງການ (ກະຊວງອຸດສາຫະກຳ ແລະ ການຄ້າ) ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ແບບຟອມ, ຄ່າແບບຟອມ, ຄ່າທຳນຽມ ແລະ ກຳນົດເວລາໃນການພິຈາລະນາຄຳຮ້ອງແຈ້ງຈົດທະບຽນສະຫະກອນ ເພື່ອຊາບ ແລະ ປະຕິບັດເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ ດັ່ງນີ້:

ກ. ຈຳນວນເອກະສານແຈ້ງຈົດທະບຽນສະຫະກອນ ປະກອບດ້ວຍ:

1. ໃບຄຳຮ້ອງແຈ້ງຈົດທະບຽນສະຫະກອນ;
2. ໃບສະເໜີຈອງຊື່ສະຫະກອນ;
3. ບົດບັນທຶກກອງປະຊຸມສ້າງຕັ້ງສະຫະກອນ;
4. ກົດລະບຽບສະຫະກອນ.

ຊຸດແບບຟອມເອກະສານແຈ້ງຈົດທະບຽນສະຫະກອນ ປະກອບດ້ວຍ 4 ແບບຟອມເອກະສານຂ້າງເທິງນີ້ ແລະ ແບບຟອມເອກະສານຄັດຕິດອື່ນໆ (ລາຍລະອຽດກ່ຽວກັບຈຳນວນ ແລະ ເນື້ອໃນແບບຟອມເອກະ ສານດັ່ງກ່າວຄັດຕິດມາພ້ອມນີ້).

ຂ. ຄ່າແບບຟອມເອກະສານ ແລະ ຄ່າອັດສຳເນົາເອກະສານ ແຈ້ງຈົດທະບຽນສະຫະກອນ ມີດັ່ງນີ້:

- ຄ່າແບບຟອມເອກະສານແຈ້ງຈົດທະບຽນສະຫະກອນ 50.000 ກີບ/ຊຸດ;
- ຄ່າພິມໃບທະບຽນສະຫະກອນ 30.000 ກີບ/ຊຸດ;
- ຄ່າອັດສຳເນົາເອກະສານແຈ້ງຈົດທະບຽນສະຫະກອນ 2.000 ກີບ/ໃບ.

ແບບຟອມ ແລະ ຄ່າແບບຟອມຄຳຮ້ອງປ່ຽນແປງເນື້ອໃນທະບຽນສະຫະກອນ ໃຫ້ນຳໃຊ້ແບບຟອມ ແລະ ຄ່າແບບຟອມ ຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ.

ຄ. ຄ່າທຳນຽມອອກໃບທະບຽນສະຫະກອນ

ຄ່າທຳນຽມອອກໃບທະບຽນສະຫະກອນ ແມ່ນໃຫ້ປະຕິບັດຕາມລັດຖະດຳລັດ ເລກທີ 003/ປປທ, ລົງວັນທີ 26 ທັນວາ 2012.

ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ທີ່ກ່ຽວຂ້ອງ ອອກສະໂນດນຳສົ່ງການເກັບຄ່າທຳນຽມດັ່ງກ່າວ ໃຫ້ຂະແໜງການເງິນເປັນຜູ່ເກັບ.

ງ. ການພິຈາລະນາຄຳຮ້ອງແຈ້ງຈົດທະບຽນສະຫະກອນຕ້ອງບໍ່ເກີນ 3 ວັນລັດຖະການ ນັບແຕ່ວັນທີ່ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງຮັບຄຳຮ້ອງແຈ້ງຈົດທະບຽນສະຫະກອນເປັນຕົ້ນໄປ;

ຈ. ການຈົດທະບຽນສະຫະກອນ ໃນແຕ່ລະຄັ້ງໃຫ້ເຮັດເປັນ ສາມສະບັບ, ໃນນີ້: ສະບັບໜຶ່ງ ມອບໃຫ້ສະຫະກອນທີ່ກ່ຽວຂ້ອງ, ສະບັບສອງ ສົ່ງໃຫ້ພາກສ່ວນສ່ວຍສາອາກອນ ແລະ ສະບັບສາມ ເກັບສຳເນົາໄວ້ໃນຖານຂໍ້ມູນຂອງວິສາຫະກິດ.

ສ. ໃນກໍລະນີ ມີການລະເມີດແຈ້ງການສະບັບນີ້ ໃຫ້ຂັ້ນເທິງທີ່ມີສິດອຳນາດນຳໃຊ້ມາດຕະການຕາມ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

ຊ. ສະຫະກອນ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງໃນໄລຍະທີ່ຜ່ານມາ ແມ່ນໃຫ້ມາແຈ້ງຈົດທະບຽນສະຫະກອນໃຫ້ຖືກຕ້ອງຕາມແຈ້ງການສະບັບນີ້.

ຍ. ການນຳໃຊ້ແບບຟອມແຈ້ງຈົດທະບຽນສະຫະກອນຕາມແຈ້ງການສະບັບນີ້ ໃຫ້ເລີ່ມປະຕິບັດນັບ ແຕ່ວັນທີ 1 ກຸມພາ 2016 ເປັນຕົ້ນໄປ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ໙

ຫົວໜ້າຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ

ພຸດທະວັນ ນັນທະວົງ